ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1540

ກະຊວງສາທາລະນະສຸກ

ເລກທີ /ສທ

ນະຄອນຫຼວງວຽງຈັນ, ວັນທີ 25 DEC 2020

# ຄຳແນະນຳ
# ການຈັດຕັ້ງປະຕິບັດດຳລັດ
# ວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

- ອີງຕາມ ດຳລັດວ່າດວ້ຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ ສະບັບເລກທີ 96/ນຍ, ລົງວັນທີ 9 ມີນາ 2017;
- ອີງຕາມ ດຳລັດວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ນຍ, ລົງວັນທີ 30 ທັນວາ 2019;
- ອີງຕາມ ໜັງສືສະເໜີ ຂອງກົມອະນາໄມ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 734/ກອສ, ລົງວັນທີ 23 ທັນວາ 2020.

ເພື່ອຜັນຂະຫຍາຍເນື້ອໃນ ດຳລັດວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ນຍ, ລົງວັນທີ 30 ທັນວາ 2019 ໃຫ້ເປັນອັນລະອຽດ, ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ ແລະ ຮັບປະກັນ ຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

## ລັດຖະມົນຕີ ອອກຄຳແນະນຳ:

## I. ບົດບັນຍັດທົ່ວໄປ

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ແນະນຳ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍສະເພາະ ພະນັກງານສາທາລະນະສຸກ ທີ່ເຮັດວຽກຢູ່ໃນລະບົບການຮັກສາສຸຂະພາບ ແລະ ຜູ້ດຳເນີນທຸລະກິດ ກ່ຽວກັບ ຜະລິດຕະພັນ ແລະ ອຸປະກອນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ໃນການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ຜະລິດ ຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ນຍ, ລົງວັນທີ 30 ທັນວາ 2019 ແນ່ໃສ່ເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍ ມີສຸຂະພາບດີ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

2. ການອະທິບາຍຄຳສັບ

1) **ກົດລະບຽບອາຫານສາກົນ** ໝາຍເຖິງ ບັນດາມາດຕະຖານ, ຄຳແນະນຳ, ກົດລະບຽບຂອງພາກປະຕິບັດ ທີ່ຮັບຮອງ ໂດຍຄະນະກຳມະການກົດລະບຽບອາຫານສາກົນ, ມາດຕະຖານດ້ານອາຫານ ຂອງອົງການ ອະນາໄມໂລກ ແລະ ອົງການອາຫານ ແລະ ການກະເສດ ທີ່ໄດ້ກຳນົດ ເພື່ອປົກປ້ອງສຸຂະພາບ ຂອງຜູ້ຊົມໃຊ້ ແລະ ຄວາມເປັນທຳ ຂອງການຄ້າດ້ານອາຫານ;

2) **ຊຸມຊົນ** ໝາຍເຖິງ ສະຖານທີ່ພັກອາໄສ, ສາທາລະນະ ແລະ ເອກະຊົນ ທີ່ຄົນຢູ່ຮ່ວມກັນຈຳນວນຫຼາຍ ເປັນຕົ້ນ ສູນການຄ້າ, ຕະຫຼາດ, ຮ້ານຄ້າຂາຍເຄື່ອງຍ່ອຍ, ສະໜາມບິນ, ສະຖານີລົດເມ ຫຼື ລົດໂດຍສານ, ສະຖານທີ່ຈອດລົດ, ໂຮງງານ ຫຼື ບໍລິສັດ, ສະຖານທີ່ການສຶກສາ, ໂຮງລ້ຽງເດັກ, ໂຮງຮຽນອະນຸບານ, ເດີ່ນເດັກຫຼິ້ນ;

3) **ຜູ້ຊົມໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ ຫຼື ນຳໃຊ້ສິນຄ້າ ແລະ ການບໍລິການ ຢ່າງຖືກຕ້ອງ ໂດຍບໍ່ມີຈຸດປະສົງທາງການຄ້າ;

4) **ຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ** ໝາຍເຖິງຜະລິດຕະພັນທີ່ໃຊ້ຄວບຄູ່ກັບ ນ້ຳນົມແມ່ ຫຼື ໃຊ້ແທນນ້ຳນົມແມ່ ສຳລັບເດັກອ່ອນ ແລະ ເດັກນ້ອຍ ແຕ່ມື້ເກີດ ຫາ ອາຍຸສາມສິບຫົກເດືອນ ເປັນຕົ້ນ ນົມຜົງສູດສຳລັບລ້ຽງເດັກອ່ອນ, ນົມຜົງສູດສຳລັບເດັກນ້ອຍ ຫຼື ນົມຜົງສູດສຳລັບການຈະເລີນເຕີບໂຕ;

5) **ເຕົ້ານົມທຽມ** ໝາຍເຖິງ ເຕົ້ານົມຢາງ, ເຕົ້ານົມແກ້ວ ຫຼື ເຕົ້ານົມທຸກປະເພດ ທີ່ນຳມາໃຊ້ໃນການໃຫ້ອາຫານເດັກອ່ອນ ແລະ ເດັກນ້ອຍ ຍົກເວັ້ນ ເຕົ້ານົມແມ່;

6) **ການສົ່ງເສີມການຂາຍດ້ວຍການຈັບຄູ່ສິນຄ້າ** ໝາຍເຖິງ ຮູບແບບ ຫຼື ຮູບການ ທາງດ້ານການຕະຫຼາດ ຂອງຜູ້ດຳເນີນທຸລະກິດ ເພື່ອດຶງດູດຜູ້ບໍລິໂພກ ດ້ວຍວິທີ ເອົາຜະລິດຕະພັນອື່ນ ຈັບຄູ່ກັບຜະລິດຕະພັນ ແລະ ອຸປະກອນ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ; ການຫຸ້ມຫໍ່, ການສ້າງຍີ່ຫໍ້ ແລະ ການຕິດສະຫຼາກ ກ່ຽວກັບຜະລິດຕະພັນ ແລະ ອຸປະກອນ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ຄ້າຍຄືກັບຜະລິດຕະພັນອື່ນ ຫຼື ໃກ້ຄຽງກັບຍີ່ຫໍ້ອື່ນ; ການສ້າງກິດຈະກຳການສົ່ງເສີມຜະລິດຕະພັນໃດໜຶ່ງ ແລ້ວຈັບຄູ່ກັບຜະລິດຕະພັນ ແລະ ອຸປະກອນ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ;

7) **ລະບົບການຮັກສາສຸຂະພາບ** ໝາຍເຖິງ ຕາໜ່າງການບໍລິການດ້ານສຸຂະພາບ ສຳລັບ ແມ່, ແມ່ຍິງຖືພາ, ເດັກອ່ອນ ແລະ ເດັກນ້ອຍ ທີ່ມີສ່ວນຮ່ວມ ຂອງອົງການລັດ, ອົງການທີ່ບໍ່ຂຶ້ນກັບລັດຖະບານ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ບຸກຄົນ ໂດຍທາງກົງ ຫຼື ທາງອ້ອມ;

8) **ການຕະຫຼາດ** ໝາຍເຖິງ ຮູບແບບ ຫຼື ວິທີການໃດໜຶ່ງ ທີ່ເປັນ ການສະໜັບສະໜູນ, ການໂຄສະນາ ແລະ ການເຜີຍແຜ່ ຂໍ້ມູນ ຂ່າວສານ ໃນການຂາຍ ຫຼື ການຈຳໜ່າຍ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໂດຍທາງກົງ ຫຼື ທາງອ້ອມ ລວມທັງ ຈັບຄູ່ສິນຄ້າ ແລະ ການຕະຫຼາດ ທາງອອນໄລ.

3. **ຂອບເຂດການນຳໃຊ້**

ຄຳແນະນຳສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນ ໂດຍທາງກົງ ຫຼື ທາງອ້ອມ ທີ່ກ່ຽວກັບດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ຢູ່ ສປປ ລາວ.

## II. ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ນຍ, ລົງວັນທີ 30 ທັນວາ 2019 ແລະ ຄຳແນະນຳສະບັບນີ້ ໃຫ້ອີງໃສ່ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ດັ່ງນີ້:

1) ກົດໝາຍວ່າດ້ວຍ ອາຫານ;
2) ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ;
3) ກົດໝາຍວ່າດ້ວຍ ການອະນາໄມ ແລະ ສົ່ງເສີມສຸຂະພາບ;
4) ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້;
5) ກົດໝາຍວ່າດ້ວຍ ສື່ມວນຊົນ;
6) ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງອາຫານ ແລະ ຢາ;
7) ນິຕິກຳອື່ນ ທີ່ກ່ຽວຂ້ອງກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

## III. ການລ້ຽງລູກດ້ວຍນ້ຳນົມແມ່ ແລະ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

### 1. ການຄຸ້ມຄອງ ຂໍ້ມູນຂ່າວສານ ແລະ ການໂຄສະນາ ເຜີຍແຜ່

#### 1.1 ການຄຸ້ມຄອງ ຂໍ້ມູນຂ່າວສານ

1) ກະຊວງສາທາລະນະສຸກ ຮັບຜິດຊອບການສະໜອງ ຂໍ້ມູນ ຂ່າວສານ ແກ່ຊຸມຊົນ ແລະ ພະນັກງານສາທາລະນະສຸກ ທີ່ເຮັດວຽກຢູ່ໃນລະບົບການຮັກສາສຸຂະພາບ ກ່ຽວກັບການປຸງແຕ່ງ ແລະ ການນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

2) ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ຊຶ່ງແມ່ນ ສູນໂພຊະນາການ ແລະ ສູນສື່ສານເພື່ອສຸຂະພາບ ແລະ ສຸຂະສຶກສາ ຮັບຜິດຊອບປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນ ການລ້ຽງລູກດ້ວຍນ້ຳນົມແມ່ ໂດຍໂຄສະນາ, ສຸຂະສຶກສາ, ເຜີຍແຜ່ ຄວາມອັນຕະລາຍຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງ ສ່ວນປະສົມ, ເຕົ້ານົມທຽມ ແລະ ຫົວນົມຢາງທັງໝົດ ຫຼື ບາງສ່ວນ ໂດຍຜ່ານສື່ສານມວນຊົນ;

3) ກະຊວງສາທາລະນະສຸກ ໂດຍມອບໃຫ້ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກົມອາຫານ ແລະ ຢາ ແລະ ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ດຳເນີນການຢ່າງຕໍ່ເນື່ອງ ໃນການຊຸກຍູ້, ຕິດຕາມ ແລະ ກວດກາ ບັນດາກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການໂຄສະນາ, ເຜີຍແຜ່ ໃຫ້ຖືກຕ້ອງ ກ່ຽວກັບຂໍ້ດີຂອງການລ້ຽງລູກດ້ວຍນ້ຳນົມແມ່ ແລະ ຜົນຮ້າຍ ຂອງການລ້ຽງລູກດ້ວຍຜະລິດຕະພັນອາຫານ, ການນຳໃຊ້ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງ ຕິດຕາມ, ກວດກາ ຂໍ້ມູນ ຂ່າວສານ ກ່ຽວກັບ ການຜະລິດ, ການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ການຂາຍຍົກ, ຂາຍຍ່ອຍ, ການຊ່ວຍເຫຼືອ, ການຕິດສະຫຼາກ, ການໂຄສະນາ, ແລະ ອື່ນໆ ຂອງຜູ້ປະກອບການ;

4) ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ຈະໂຄສະນາ, ເຜີຍແຜ່, ໃຫ້ຄວາມຮູ້ກ່ຽວກັບຄຸນປະໂຫຍດຂອງການລ້ຽງລູກດ້ວຍນ້ຳນົມແມ່ ແລະ ຜົນຮ້າຍຂອງການລ້ຽງລູກດ້ວຍຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຫຼື ຂໍ້ມູນ ຂ່າວສານ ອື່ນ ໃຫ້ແກ່ພະນັກງານສາທາລະນະສຸກ, ຊຸມຊົນ ແລະ ສັງຄົມ ໂດຍຜ່ານສື່ສານມວນຊົນ ທັງພາຍໃນ ແລະ ອ້ອມຂ້າງ ສະຖານທີ່ບໍລິການສຸຂະພາບ ຫຼື ສະຖານທີ່ຂາຍຍ່ອຍ ແລະ ສະຖານທີ່ອື່ນ ຕ້ອງໄດ້ຮັບອະນຸຍາດດ້ານເນື້ອໃນ, ຮູບການ, ວິທີການ ຈາກກົມອະນາໄມ ແລະ ສົ່ງເສີມສຸຂະພາບ ສົມທົບກັບ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ;

5) ການສ້າງ, ໂຄສະນາ, ເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃດໜຶ່ງ ຕ້ອງໄດ້ຂໍອະນຸຍາດ ຈາກກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ ຈຶ່ງສາມາດດຳເນີນການໄດ້. ສຳລັບການຂໍອະນຸຍາດນັ້ນ ຕ້ອງໄດ້ປະຕິບັດຕາມແຕ່ລະກໍລະນີ ຫຼື ຮູບແບບ ຂອງການໂຄສະນາ ເຜີຍແຜ່.

**1.2 ການໂຄສະນາ ເຜີຍແຜ່**

ການໂຄສະນາ ເຜີຍແຜ່ ຂໍ້ມູນ ຂ່າວສານ ຜ່ານສື່ມວນຊົນ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງມີເນື້ອໃນ ດັ່ງນີ້:

1) ມີເຕັກນິກ ແລະ ວິທະຍາສາດ, ບໍ່ໃຫ້ມີຮູບພາບ ແລະ ເນື້ອໃນ ທີ່ມີລັກສະນະດຶງດູດ, ຈູງໃຈ;

2) ມີຄຳກ່າວອ້າງ ຫຼື ຂໍ້ມູນ ຂ່າວສານ ທີ່ມີມູນຄວາມຈິງ, ບໍ່ເກີນຄວາມເປັນຈິງ ຫຼື ຄຸນປະໂຫຍດ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

3) ພິມຕົວອັກສອນ ເປັນພາສາລາວ ແລະ ອະທິບາຍ ຢ່າງຈະແຈ້ງ;

4) ຫຼີກລ້ຽງຄຳສັບ ທີ່ຈະເຮັດໃຫ້ບຸກຄົນ ເກີດຄວາມເຊື່ອ ຫຼື ເຂົ້າໃຈຜິດ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຫຼື ກ່າວອ້າງຄຸນຄ່າເທົ່າທຽມກັນກັບນົມແມ່ ຫຼື ສູງກວ່ານ້ຳນົມແມ່ ໃນການລ້ຽງເດັກອ່ອນ ແລະ ເດັກນ້ອຍ;

5) ບໍ່ໃຫ້ມີ ຊື່ຍີ່ຫໍ້ ຫຼື ສັນຍາລັກ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ແລະ ຜູ້ເປັນຕົວແທນໂຄສະນາ, ເຜີຍແຜ່ ຫຼື ຕົວແທນການຈຳໜ່າຍ;

6) ອະທິບາຍ ເຖິງຜົນປະໂຫຍດ ແລະ ຄຸນຄ່າ ໃນການລ້ຽງລູກດ້ວຍນ້ຳນົມແມ່ ສູງກວ່າການລ້ຽງລູກດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ລະອຽດຈະແຈ້ງ;

7) ອະທິບາຍ ການລ້ຽງລູກດ້ວຍນ້ຳນົມແມ່ ຕັ້ງແຕ່ມື້ເກີດ ແລະ ຮັກສາ ການລ້ຽງລູກດ້ວຍນ້ຳນົມແມ່ຢ່າງດຽວ ແລະ ຕະຫຼອດໄປ ໃຫ້ລະອຽດຈະແຈ້ງ;

8) ອະທິບາຍ ຄວາມຫຍຸ້ງຍາກ ໃນການເອົາລູກມາລ້ຽງດ້ວຍນ້ຳນົມແມ່ຄືນ ຖ້າລ້ຽງລູກດ້ວຍຜະລິດຕະພັນອາຫານທົດແທນນ້ຳນົມແມ່ ໃຫ້ລະອຽດຈະແຈ້ງ;

9) ອະທິບາຍ ການເລີ່ມລ້ຽງລູກ ດ້ວຍອາຫານເສີມ ນັບແຕ່ອາຍຸ 6 ເດືອນເປັນຕົ້ນໄປ ໃຫ້ລະອຽດຈະແຈ້ງ;

**10)** ອະທິບາຍ ເຖິງຜົນກະທົບທາງລົບ ຖ້າລ້ຽງລູກດ້ວຍຜະລິດຕະພັນອາຫານ ທົດແທນນໍ້ານົມແມ່, ການນໍາໃຊ້ເຕົ້ານົມທຽມ ແລະ ຫົວແວ້ດູດ ລວມທັງການໃຫ້ອາຫານເສີມກ່ອນກໍານົດ ໃຫ້ລະອຽດຈະແຈ້ງ;

**11)** ອະທິບາຍ ເຖິງການລ້ຽງລູກດ້ວຍອາຫານເສີມ ທີ່ສາມາດປຸງແຕ່ງໄດ້ງ່າຍດ່າຍ ພາຍໃນບ້ານ ໂດຍນໍາໃຊ້ ເຄື່ອງປຸງ ທີ່ມີໃນບ້ານ ໃຫ້ລະອຽດຈະແຈ້ງ.

ສໍາລັບ ຄູ່ມືໃນການປະຕິບັດໄດ້ກໍານົດໄວ້ ຕ່າງຫາກ.

## 2. ການບໍ່ອະນຸຍາດໃຫ້ສົ່ງເສີມ ແລະ ບໍລິຈາກ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະບໍ່ໄດ້ຮັບອະນຸຍາດໃຫ້ ສົ່ງເສີມ ການຜະລິດ, ການໂຄສະນາ, ເຜີຍແຜ່, ການຈໍາໜ່າຍ, ການຊື້-ຂາຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ດ້ວຍວິທີການໃດໜຶ່ງ ໂດຍທາງກົງ ຫຼື ທາງອ້ອມ ທີ່ເປັນການຈູງໃຈ, ຊວນເຊື່ອ, ຊວນຊື້ ໃຫ້ແກ່ຜູ້ຊົມໃຊ້, ພະນັກງານສາທາລະນະສຸກ ທີ່ເຮັດວຽກຢູ່ໃນລະບົບການຮັກສາສຸຂະພາບ ເພື່ອຜົນປະໂຫຍດທາງດ້ານການເງິນ ຫຼື ຜົນປະໂຫຍດທີ່ເປັນວັດຖຸ ແລະ ຜົນປະໂຫຍດອື່ນ ເປັນຕົ້ນ ການສະເໜີໃຫ້ຂອງຂວັນ, ການບໍລິຈາກ, ການແຈກຢາຍ, ການເປັນສະມາຊິກ, ເງິນທຶນການສຶກສາ ແລະ ກະສິກໍາ, ກິດຈະກໍາສົ່ງເສີມ ໃນງານສໍາມະນາ, ງານມະຫາກໍາເຫດສະການ, ງານບຸນ, ກິລາ, ການສະໜັບສະໜູນ ທີ່ເປັນການລະເມີດ ແລະ ການກະທໍາຜິດ ທາງດ້ານກົດໝາຍ ເປັນຕົ້ນ ການບິດເບືອນຂໍ້ມູນ ຂ່າວສານ, ການໃຫ້ສິນບົນ ແລະ ຮັບສິນບົນ, ການສໍ້ໂກງ ເພື່ອຫາຜົນປະໂຫຍດສ່ວນຕົວ.

ສໍາລັບ ການອະນຸຍາດ ໃຫ້ມີການບໍລິຈາກ ຫຼື ແຈກຢາຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ໂດຍທາງກົງ ຫຼື ທາງອ້ອມ ໃຫ້ແກ່ສະຖານນະການພິເສດໃນເຂດ ຫຼື ພື້ນທີ່ເກີດໄພພິບັດ ຫຼື ອຸທົກກະໄພ ລະດັບຊາດ ແລະ ການບໍລິຈາກທີ່ຈໍາເປັນອື່ນໆ ນັ້ນ, ຕ້ອງໄດ້ຂໍອະນຸມັດຈາກ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ. ການບໍລິຈາກດັ່ງກ່າວ ຕ້ອງກໍານົດ ເຫດຜົນ, ເງື່ອນໄຂ , ກໍານົດເວລາ, ແລະ ສາມາດກວດສອບໄດ້ ໃນທຸກກິດຈະກໍາ ຂອງການບໍລິຈາກ ແລະ ຕ້ອງບໍ່ມີຂໍ້ຜູກພັນ ຫຼື ເງື່ອນໄຂ ໃດໆ.

## 3. ການກໍານົດລັກສະນະ ຂອງສະຫຼາກຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ

ເນື້ອໃນສະຫຼາກ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ນອກຈາກປະຕິບັດ ຕາມກົດລະຫັດອາຫານສາກົນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລ້ວ, ຕ້ອງໄດ້ຮັບການອະນຸມັດ ຈາກກະຊວງສາທາລະນະສຸກ ໂດຍແມ່ນກົມອາຫານ ແລະ ຢາ ເປັນຜູ້ຄົ້ນຄ້ວາ ແລະ ນໍາສະເໜີ ລວມທັງການອະນຸມັດການຫຸ້ມຫໍ່ ແລະ ການຕິດສະຫຼາກ. ສໍາລັບ ຂັ້ນຕອນ ແລະ ວິທີການ ການອະນຸມັດ ໃຫ້ປະຕິບັດ ຕາມຂໍ້ຕົກລົງການຂຶ້ນທະບຽນອາຫານ.

### 3.1 ສິ່ງທີ່ບໍ່ໃຫ້ກໍານົດໃນສະຫຼາກ

ເພື່ອຮັບປະກັນການ ໃຫ້ເນື້ອໃນ ສະຫຼາກ ແລະ ການຫຸ້ມຫໍ່ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ໄດ້ຕາມມາດຕະຖານ ຂອງກົດລະຫັດອາຫານສາກົນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງແລ້ວ ຕ້ອງບໍ່ມີລັກສະນະ ການພິມ, ຮູບພາບ, ຮູບແຕ້ມ ແລະ ເຮັດສິ່ງໃດໜຶ່ງ ທີ່ເປັນການດຶງດູດ, ການຊວນເຊື່ອ ຫຼື ຊວນຊື້ ດັ່ງນີ້:

1) ຮູບເດັກອ່ອນ ຫຼື ເດັກນ້ອຍ ຮ່ວມກັບກັບ ແມ່, ພໍ່, ອ້າຍເອື້ອຍນ້ອງ, ພໍ່ເຖົ້າແມ່ເຖົ້າ, ພໍ່ປູ່ແມ່ຍ່າ, ພີ່ນ້ອງຄົນອື່ນ, ຄົນດູແລເດັກ ຫຼື ຄອບຄົວ;

2) ຮູບພາບ ຫຼື ຮູບແຕ້ມ ຂອງເດັກອ່ອນ, ເດັກນ້ອຍ, ບຸກຄົນ, ຕົວສະແດງເປັນສັດ ຫຼື ຕົວສະແດງ ທີ່ສະແດງການເປັນຕົວແທນ ຂອງພໍ່ແມ່, ອ້າຍເອື້ອຍນ້ອງ ຫຼື ຄອບຄົວ ທີ່ກຳລັງຖື ຫຼື ມີ ເຕົ້ານົມທຽມ ຫຼື ພາຊະນະບັນຈຸອາຫານໃດໜຶ່ງ ທີ່ມີລັກສະນະຄ້າຍຄືອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

3) ເຕົ້ານົມທຽມ ຫຼື ພາຊະນະໃດໜຶ່ງ ທີ່ມີລັກສະນະຄ້າຍຄື ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ທີ່ບັນຈຸສານສີຂາວ;

4) ຮູບພາບ ຫຼື ຮູບແຕ້ມ ຂອງເດັກອ່ອນ ຫຼື ເດັກນ້ອຍ ແລະ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ຢູ່ໃນຮູບພາບດຽວກັນ;

5) ຮູບພາບ ຫຼື ຮູບແຕ້ມ ຂອງເດັກອ່ອນ ແລະ ເດັກນ້ອຍ ແລະ ບຸກຄົນໃດໜຶ່ງ ທີ່ຕິດຢູ່ນຳຍີ່ຫໍ້ຂອງຜະລິດຕະພັນ;

6) ພາຊະນະບັນຈຸໃດໜຶ່ງ ທີ່ຄ້າຍຄືກັບ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເປັນຕົ້ນ ເຕົ້ານົມທຽມ, ຫົວນົມຢາງ, ແວ້ດູດ ທີ່ນຳໃຊ້ໃຫ້ອາຫານເດັກອ່ອນ ແລະ ເດັກນ້ອຍ;

7) ວາງ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ບ່ອນທີ່ເຫັນແຈ້ງ, ໃກ້ກັບສິນຄ້າທີ່ສຳຄັນ ຫຼື ທີ່ນິຍົມ;

8) ພິມ ໃສ່ພາຊະນະ ທີ່ຜະລິດຈາກ ແກ້ວ, ຢາງ ຫຼື ວັດຖຸທີ່ຄ້າຍຄື ແລະ/ຫຼື ສາມາດນຳໃຊ້ ຄ້າຍຄືກັບອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ເພື່ອການໂຄສະນາ;

9) ເຕົ້ານົມທຽມ, ຫົວນົມຢາງ, ແວ້ດູດ ຫຼື ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

10) ຂໍ້ຄວາມ, ຄຳເວົ້າ, ຄຳສັບ ຫຼື ປະໂຫຍກຄຳເວົ້າ ໃດໜຶ່ງ ທີ່ອ້າງວ່າໄດ້ຮັບການຮັບຮອງ ໂດຍອົງການຈັດຕັ້ງ ຫຼື ສູນການວິໄຈ ຈາກຜູ້ຊ່ຽວຊານ;

11) ການໃສ່ສີ, ການອອກແບບ, ຊື່, ຄຳຂວັນ, ຕຸກກະຕາ ຫຼື ສັນຍາລັກ ທີ່ເປັນອັນດຽວ ຫຼື ຄ້າຍຄືກັນກັບຜະລິດຕະພັນໃດໜຶ່ງ;

12) ຂໍ້ຄວາມ, ຄຳເວົ້າ, ຄຳສັບ ຫຼື ປະໂຫຍກຄຳເວົ້າ, ຮູບພາບ ໃດໜຶ່ງ ທີ່ຍົກສູງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ຫຼື ມີລັກສະນະ ທີ່ຈະທຳລາຍ, ບໍ່ສົ່ງເສີມ ຫຼື ຂັດຂວາງ ການລ້ຽງລູກດ້ວຍນ້ຳນົມແມ່ ຫຼື ສ້າງຄວາມເຊື່ອວ່າ ຜະລິດຕະພັນດັ່ງກ່າວ ມີຄຸນຄ່າທຽບເທົ່າ ຫຼື ສູງກວ່ານ້ຳນົມແມ່;

13) ຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ການແນະນຳ ໃດໜຶ່ງ ທີ່ເປັນການສົ່ງເສີມໃຫ້ອາຫານແກ່ລູກ ໂດຍນຳໃຊ້ ເຕົ້ານົມທຽມ, ຫົວນົມຢາງ, ແວ້ດູດ ຫຼື ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

14) ເປັນອົງປະກອບ ສ່ວນໃດສ່ວນໜຶ່ງ ທີ່ໂຄສະນາແບບຈັບຄູ່ສິນຄ້າ ເປັນຕົ້ນ ການນຳໃຊ້ຊື່ຍີ່ຫໍ້, ການອອກແບບການຫຸ້ມຫໍ່, ຮູບແບບສີ, ຕຸກກະຕາ, ສັນຍາລັກ ທີ່ຄ້າຍຄືກັບນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ຫຼື ນົມຜົງສູດສຳລັບເດັກນ້ອຍ ໂດຍຜູ້ປະກອບການດຽວກັນ;

15) ການກ່າວອ້າງ ທີ່ບໍ່ມີຂໍ້ມູນຄວາມຈິງ, ຕົວະຍົວະຫຼອກລວງ ຫຼື ເຮັດໃຫ້ເຂົ້າໃຈຜິດດ້ານໂພຊະນາການ ຫຼື ການກ່າວອ້າງ ກ່ຽວກັບສຸຂະພາບ ທີ່ຂັດກັບລະບຽບການກ່ຽວກັບອາຫານ.

**3.2 ສິ່ງທີ່ໃຫ້ກຳນົດໃນສະຫຼາກ**

ເພື່ອຮັບປະກັນການ ໃຫ້ເນື້ອໃນ ແລະ ຕິດສະຫຼາກ ແລະ ຫຸ້ມຫໍ່ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ໄດ້ຕາມມາດຕະຖານ ຂອງກົດລະຫັດອາຫານສາກົນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງແລ້ວ ຕ້ອງໃຫ້ມີລັກສະນະ ການພິມ ຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ຄຳແນະນຳ ທີ່ເປັນພາສາລາວ ແລະ ມີເນື່ອໃນ ດັ່ງນີ້:

**1)** ມີຂໍ້ສັງເກດ ທີ່ສຳຄັນ ຫຼື ຄຳເຕືອນ ທີ່ມີຄວາມໝາຍ ຄືກັນ ຫຼື ຄ້າຍຄືກັນ ກັບ ກົດລະຫັດອາຫານສາກົນ ແລະ ລັດຖະບານ ກຳນົດ;

**2)** ການລ້ຽງລູກດ້ວຍນ້ຳນົມແມ່ ແມ່ນມີຄຸນຄ່າດີທີ່ສຸດ;

**3)** ບໍ່ມີສິ່ງໃດສາມາດທົດແທນນ້ຳນົມແມ່ໄດ້;

**4)** ການນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຈະເຮັດໃຫ້ການຜະລິດນ້ຳນົມແມ່ ຫຼຸດລົງ;

**5)** ຄວາມຈຳເປັນ ການນຳໃຊ້ ແລະ ວິທີການນຳໃຊ້ ກ່ຽວກັບ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຈາກໜ່ວຍງານ ຫຼື ພະນັກງານສາທາລະນະສຸກ ທີ່ຖືກຕ້ອງ;

**6)** ຄຳແນະນຳ ໃນການປຸງແຕ່ງ ແລະ ການນຳໃຊ້ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງໃຊ້ ຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ຄຳແນະນຳ ທີ່ເໝາະສົມ ແລະ ເຂົ້າໃຈງ່າຍ;

**7)** ມີຄຳເຕືອນ, ຄຳແນະນຳກ່ຽວກັບການນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງລະບຸອາຍຸຂອງເດັກ ແລະ ຄວາມອັນຕະລາຍຕໍ່ສຸຂະພາບ ຂອງການປຸງແຕ່ງທີ່ບໍ່ຖືກຕ້ອງ;

**8)** ເງື່ອນໄຂ ຂອງການເກັບຮັກສາທີ່ຈຳເປັນ ທັງກ່ອນ ແລະ ຫຼັງ ເປີດຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງຄານຶງເຖິງອຸນຫະພູມ ແລະ ສະພາບອາກາດ;

**9)** ຄວາມເປັນອັນຕະລາຍຕໍ່ສຸຂະພາບ ຈາກການນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງນົມຜົງທົດແທນນ້ຳນົມແມ່ ທີ່ອາດມີຈຸລິນຊີເຊື້ອພະຍາດ;

**10)** ລະບຸເປັນຕົວເລກ ຂອງວັນທີເດືອນປີ ຜະລິດ, ໝົດອາຍຸ, ເລກທີກຳກັບຊຸດຜະລິດ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

**11)** ລະບຸສ່ວນປະກອບ ຫຼື ສ່ວນປະສົມ ຂອງຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ພ້ອມກັບລາຍການທີ່ໄດ້ວິເຄາະ ກ່ຽວກັບຄຸນຄ່າທາງດ້ານໂພຊະນາການ ແລະ ຕົ້ນກຳເນີດການຜະລິດ ແລະ ບໍ່ໃຫ້ມີແຜນພູມ ທີ່ສະແດງໃຫ້ເຫັນການປຽບທຽບກັບນ້ຳນົມແມ່;

**12)** ຊື່ ແລະ ທີ່ຢູ່ ສະຖານທີ່ການຜະລິດ.

**4. ສະຫຼາກ ສຳລັບນົມຜົງສູດສຳລັບເດັກອ່ອນ, ນົມຜົງຕໍ່ສູດເນື່ອງ ແລະ ນົມຜົງສູດສຳລັບເດັກນ້ອຍ**

ສະຫຼາກສຳລັບ ນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດສຳລັບເດັກນ້ອຍ ລວມທັງນົມຜົງສູດສຳລັບການຈະເລີນເຕີບໂຕ, ອາຫານເສີມ ຫຼື ອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍອື່ນ ຕ້ອງລະບຸເປັນພາສາລາວ ແລະ ໃຫ້ມີລັກສະນະ ການພິມ ຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ຄຳແນະນຳ, ເນື້ອໃນ ແລະ ຂະໜາດ ດັ່ງຕໍ່ໄປນີ້:

**1)** ໃຫ້ມີ ຂໍ້ສັງເກດທີ່ສຳຄັນ ແລະ ຄຳອະທິບາຍ ທີ່ເບິ່ງເຫັນ ແລະ ເຂົ້າໃຈ ໄດ້ຢ່າງງ່າຍດ່າຍ ແລະ ຈະແຈ້ງ, ຕົວອັກສອນ ຕ້ອງເປັນສີເຂັ້ມ ແລະ ລະບຸໄວ້ດ້ານລຸ່ມ ເຊັ່ນ ການລ້ຽງລູກດ້ວຍນ້ຳນົມແມ່ ແມ່ນວິທີທີ່ງ່າຍ ແລະ ເປັນວິທີທີ່ດີ ທີ່ສຸດໃນການລ້ຽງເດັກອ່ອນ ແລະ ເດັກນ້ອຍ, ນ້ຳນົມແມ່ ແມ່ນມີຄວາມສຳຄັນຕໍ່ ການຈະເລີນເຕີບ ໂຕ ຢ່າງມີສຸຂະພາບແຂງແຮງ ແລະ ການພັດທະນາການຂອງເດັກອ່ອນ ແລະ ເດັກນ້ອຍ, ມີພູມຕ້ານທານ ຫຼື ພູມ ຄຸ້ມກັນ ຕໍ່ກັບການເກີດພະຍາດ ເຊັ່ນ ພະຍາດຖອກທ້ອງ, ພະຍາດອັກເສບປອດ ແລະ ອື່ນໆ ລວມທັງ ການກຳນົດ ຂະ ໜາດຕົວອັກສອນ ບໍ່ໃຫ້ຫຼຸດໜຶ່ງສ່ວນສາມ (1/3) ແລະ ຂະໜາດຄວາມສູງ ຂອງຕົວອັກສອນ ຕ້ອງບໍ່ໃຫ້ຫຼຸດ 2 ມິນລິແມັດ (2 ມມ);

**2)** ມີຄຳສັບທີ່ວ່າ, **"ຄຳເຕືອນ"** ໃຫ້ເຮັດເປັນຕົວອັກສອນສີເຂັ້ມ ແລະ ລະບຸຂໍ້ຄວາມທີ່ວ່າ, *"ກ່ອນທີ່ ຈະຕັດສິນໃຈໃຫ້ອາຫານເສີມ ຫຼື ແທນການລ້ຽງລູກດ້ວຍນ້ຳນົມແມ່ ດ້ວຍຜະລິດຕະພັນນີ້, ກະລຸນາຂໍຄຳ ແນະນຳ ຈາກຜູ້ຊ່ຽວຊານດ້ານສຸຂະພາບ ຫຼື ທ່ານໝໍ ກ່ອນຈະນຳໃຊ້, ເພື່ອສຸຂະພາບຂອງລູກທ່ານ ດັ່ງນັ້ນທ່ານ ຕ້ອງປະຕິບັດຕາມຄຳແນະນຳ ໃນການປຸງແຕ່ງທຸກຄັ້ງ ດ້ວຍຄວາມເອົາໃຈໃສ່ ແລະ ຖືກຕ້ອງ, ຖ້າທ່ານນຳໃຊ້ ເຕົ້ານົມທຽມ, ລູກຂອງທ່ານອາດຈະປະຕິເສດການກິນນົມຈາກເຕົ້ານົມແມ່ ຊຶ່ງບໍ່ເປັນຜົນດີ ຕໍ່ສຸຂະພາບ ຂອງ ລູກທ່ານ, ຖ້າໃຫ້ອາຫານເສີມຈາກຈອກຈະຖືວ່າຖືກຫຼັກອະນາໄມກວ່າ"* ລວມທັງ ການກຳນົດ ຂະໜາດຕົວ ອັກສອນ ບໍ່ໃຫ້ຫຼຸດໜຶ່ງສ່ວນສາມ (1/3) ຂອງຂະໜາດຕົວອັກສອນ ໃນຊື່ຜະລິດຕະພັນ ແລະ ຂະໜາດຄວາມ ສູງ ຂອງຕົວອັກສອນ ຕ້ອງບໍ່ໃຫ້ຫຼຸດ 1,5 ມິນລິແມັດ (1,5 ມມ);

**3)** ຕ້ອງມີຄຳເຕືອນທີ່ຈະແຈ້ງ ຜະລິດຕະພັນ ນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດສຳລັບເດັກນ້ອຍ ບໍ່ແມ່ນຜະລິດຕະພັນ ທີ່ອະເຊື້ອ ແລະ ອາດຈະມີຈຸລິນຊີເຊື້ອພະຍາດ ຊຶ່ງຕ້ອງປຸງ ແຕ່ງ ແລະ ນຳໃຊ້ ຢ່າງຖືກຕ້ອງ ແລະ ເໝາະສົມ;

**4)** ລະບຸ ອາຍຸຂອງເດັກ, ວັນທີເດືອນປີ ຜະລິດ, ໝົດອາຍຸ ເປັນຕົວເລກ, ເລກທີກຳກັບຊຸດຜະລິດ ຂອງ ຜະລິດຕະພັນ ນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດສຳລັບເດັກນ້ອຍ ລວມທັງນົມຜົງ ສູດສຳລັບການຈະເລີນເຕີບໂຕ, ອາຫານເສີມ ຫຼື ອາຫານອື່ນ ສຳລັບເດັກອ່ອນ ແລະ ເດັກນ້ອຍ;

**5)** ລ້ຽງລູກດ້ວຍນ້ຳນົມແມ່ ແລະ ສືບຕໍ່ ຈົນອາຍຸ ຂອງລູກ ເຖິງອາຍຸສອງປີ ຫຼື ຫຼາຍກວ່ານັ້ນ;

**6)** ບໍ່ຄວນໃຫ້ລ້ຽງລູກດ້ວຍ ນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດສຳລັບ ເດັກນ້ອຍ ລວມທັງ ນົມຜົງສູດສຳລັບການຈະເລີນເຕີບໂຕ, ອາຫານເສີມ ຫຼື ອາຫານອື່ນ ສຳລັບເດັກອ່ອນ ແລະ ເດັກນ້ອຍ ກ່ອນອາຍຸ 6 ເດືອນ;

**7)** ວິທີ ປຸງແຕ່ງ ນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດສຳລັບເດັກນ້ອຍ ລວມທັງ ນົມຜົງສູດສຳລັບການຈະເລີນເຕີບໂຕ, ອາຫານເສີມ ຫຼື ອາຫານອື່ນ ສຳລັບເດັກອ່ອນ ແລະ ເດັກນ້ອຍ ແລະ ຕ້ອງປຸງແຕ່ງຜະລິດຕະພັນດັ່ງກ່າວ ໜຶ່ງຄັ້ງ ຕໍ່ການໃຫ້ກິນນົມເທື່ອໜຶ່ງ ໂດຍໃຫ້ຕົ້ມນ້ຳກ່ອນ ແລະ ຫຼັງຈາກ ນັ້ນປະໄວ້ ໃຫ້ນ້ຳເຢັນລົງ ແຕ່ອຸນຫະພູມບໍ່ໃຫ້ຕ່ຳກວ່າ 70 ອົງສາ;

**8)** ນົມທີ່ປຸງແຕ່ງ ແລ້ວເຫຼືອຈາກເດັກກິນ ຕ້ອງຖິ້ມທັນທີ ຫຼັງຈາກໃຫ້ກິນນົມແລ້ວ ທຸກຄັ້ງ;

**9)** ລະບຸສ່ວນປະກອບ ຫຼື ສ່ວນປະສົມ ແລະ ທາດໂປຼຕີນ ຂອງຜະລິດຕະພັນ ນົມຜົງສຳລັບເດັກອ່ອນ, ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດສຳລັບເດັກນ້ອຍ ລວມທັງ ນົມຜົງສູດສຳລັບການຈະເລີນເຕີບໂຕ, ອາຫານ ເສີມ ຫຼື ອາຫານອື່ນ ສຳລັບເດັກອ່ອນ ແລະ ເດັກນ້ອຍ;

**10)** ສະຫຼາກຂອງນົມຜົງສູດຕໍ່ເນື່ອງ ຫ້າມໃຊ້ ສຳລັບເດັກອ່ອນ ທີ່ມີອາຍຸຕ່ຳກວ່າ 6 ເດືອນ ຫຼື ນຳໃຊ້ ເປັນແຫຼ່ງໂພຊະນາການພຽງຢ່າງດຽວຂອງເດັກອ່ອນ ຊຶ່ງຂໍ້ຄວາມດັ່ງກ່າວ ຕ້ອງມີຂະໜາດຕົວອັກສອນ ບໍ່ໃຫ້

ຫຼຸດໜຶ່ງສ່ວນສາມ (1/3) ຂອງຂະໜາດຕົວອັກສອນ ໃນຊື່ຜະລິດຕະພັນ ແລະ ຂະໜາດຄວາມສູງ ຂອງຕົວອັກສອນ ຕ້ອງບໍ່ໃຫ້ຫຼຸດ ໜຶ່ງຈຸດຫ້າ ມິນລິແມັດ (1,5 ມມ);

**11)** ສະຫຼາກຂອງນົມຜົງສູດສຳລັບເດັກນ້ອຍ ຫ້າມໃຊ້ ສຳລັບເດັກອ່ອນທີ່ມີອາຍຸຕໍ່າກວ່າ 12 ເດືອນ ຫຼື ນຳໃຊ້ເປັນແຫຼ່ງໂພຊະນາການພຽງຢ່າງດຽວຂອງເດັກອ່ອນ ແລະ ເດັກນ້ອຍ ຊຶ່ງຂໍ້ຄວາມດັ່ງກ່າວ ຕ້ອງມີຂະໜາດຕົວອັກສອນ ໜຶ່ງສ່ວນສາມ (1/3) ຂອງຂະໜາດຂອງຕົວອັກສອນໃນຊື່ຜະລິດຕະພັນ ແລະ ຂະໜາດຄວາມສູງຂອງຕົວອັກສອນ ທຸກຄັ້ງຕ້ອງບໍ່ໃຫ້ຫຼຸດ 1,5 ມິນລິແມັດ (1,5 ມມ);

**12)** ຕາຕະລາງແນະນຳ ການໃຫ້ນົມທີ່ສະແດງເຖິງອັດຕາສ່ວນຂອງນົມ ທີ່ຈະໃຫ້ລູກກິນ ຢ່າງເໝາະສົມ ແລະ ສອດຄ່ອງກັບຫຼັກການແນະນຳກ່ຽວກັບການໃຫ້ອາຫານ ຂອງອົງການອະນາໄມໂລກໃນແຕ່ລະໄລຍະ;

**13)** ນົມບໍ່ມີໄຂມັນ, ນົມໄຂມັນຕໍ່າ ຫຼື ນົມສຸດ ໃນຮູບແບບຜົງ ຫຼື ແຫຼວ ຕ້ອງລະບຸວ່າ "ຜະລິດຕະພັນນີ້ຫ້າມນຳໃຊ້ເປັນແຫຼ່ງໂພຊະນາການສຳລັບເດັກອ່ອນ" ຊຶ່ງຂໍ້ຄວາມດັ່ງກ່າວ ຕ້ອງມີຂະໜາດຕົວອັກສອນ ໜຶ່ງສ່ວນສາມ (1/3) ຂອງຂະໜາດຂອງຕົວອັກສອນໃນຊື່ຜະລິດຕະພັນ ແລະ ຂະໜາດຄວາມສູງຂອງຕົວອັກສອນ ທຸກຄັ້ງຕ້ອງບໍ່ໃຫ້ຫຼຸດ 1,5 ມິນລິແມັດ (1,5 ມມ);

**14)** ນົມຂົ້ນຫວານ ຕ້ອງລະບຸວ່າ " ຜະລິດຕະພັນນີ້ ຫ້າມໃຊ້ເພື່ອລ້ຽງເດັກອ່ອນ " ຊຶ່ງຂໍ້ຄວາມດັ່ງກ່າວຕ້ອງມີຂະໜາດຕົວອັກສອນ ໜຶ່ງສ່ວນສາມ (1/3) ຂອງຂະໜາດຂອງຕົວອັກສອນໃນຊື່ຜະລິດຕະພັນ ແລະ ຂະໜາດຄວາມສູງຂອງຕົວອັກສອນ ທຸກຄັ້ງຕ້ອງບໍ່ໃຫ້ຫຼຸດ 1,5 ມິນລິແມັດ (1,5 ມມ).

**5. ສະຫຼາກສຳລັບແອັດູດ**

ສະຫຼາກສຳລັບແອັດູດ ຕ້ອງມີ ຕ້ອງລະບຸເປັນພາສາລາວ ແລະ ໃຫ້ ພິມ ຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ຄຳແນະນຳ ແລະ ມີເນື້ອໃນ ວ່າ *"ການນຳໃຊ້ແອັດູດສາມາດລົບກວນການລ້ຽງລູກດ້ວຍນົມແມ່ "* ຊຶ່ງຂໍ້ຄວາມດັ່ງກ່າວ ຕ້ອງມີຂະໜາດຕົວອັກສອນ ບໍ່ໃຫ້ຫຼຸດໜຶ່ງສ່ວນສາມ (1/3) ຂອງຂະໜາດຕົວອັກສອນ ໃນຊື່ຜະລິດຕະພັນ ແລະ ຂະໜາດຄວາມສູງ ຂອງຕົວອັກສອນ ຕ້ອງບໍ່ໃຫ້ຫຼຸດ 1,5 ມິນລິແມັດ (1,5 ມມ).

**6. ສະຫຼາກ ຫຼື ເອກະສານແນະນຳສຳລັບເຕົ້ານົມທຽມ ຫຼື ຫົວນົມຢາງ**

ສະຫຼາກສຳລັບເຕົ້ານົມທຽມ ຫຼື ຫົວນົມຢາງ ຕ້ອງລະບຸເປັນພາສາລາວ ແລະ ໃຫ້ມີລັກສະນະ ການພິມຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ຄຳແນະນຳ ແລະ ມີເນື້ອໃນ ດັ່ງຕໍ່ໄປນີ້:

1) ໃຫ້ມີ *" ຂໍ້ສັງເກດທີ່ສຳຄັນ ແລະ ຄຳອະທິບາຍ "* ທີ່ເບິ່ງເຫັນ ແລະ ເຂົ້າໃຈ ໄດ້ຢ່າງງ່າຍດາຍ ແລະ ຈະແຈ້ງ, ຕົວອັກສອນ ຕ້ອງເປັນສີເຂັ້ມ ແລະ ລະບຸໄວ້ດ້ານລຸ່ມ ເຊັ່ນ *"ການລ້ຽງລູກດ້ວຍນ້ຳນົມແມ່ ແມ່ນດີທີ່ສຸດ; ນ້ຳນົມແມ່ເປັນອາຫານທີ່ດີທີ່ສຸດ ສຳລັບການຈະເລີນເຕີບໂຕ ຢ່າງມີສຸຂະພາບແຂງແຮງ ແລະ ພັດທະນາການຂອງເດັກອ່ອນ ແລະ ເດັກນ້ອຍ; ມີພູມຕ້ານທານ ຫຼື ພູມຄຸ້ມກັນ ຕໍ່ກັບການເກີດພະຍາດ ເປັນຕົ້ນ ພະຍາດຖອກທ້ອງ, ພະຍາດອັກເສບປອດ ແລະ ອື່ນໆ"* ລວມທັງ ການກຳນົດ ຂະໜາດຕົວອັກສອນ ບໍ່ໃຫ້ຫຼຸດໜຶ່ງສ່ວນສາມ (1/3) ແລະ ຂະໜາດຄວາມສູງ ຂອງຕົວອັກສອນ ຕ້ອງບໍ່ໃຫ້ຫຼຸດ 2 ມິນລິແມັດ (2 ມມ);

2) ໃຫ້ມີ *ຂໍ້ສັງເກດ ແລະ ຄຳອະທິບາຍ* ທີ່ສຳຄັນຕໍ່ສຸຂະພາບຂອງລູກທ່ານ ທີ່ທ່ານຕ້ອງປະຕິບັດຕາມຄຳແນະນຳກ່ຽວກັບການທຳຄວາມສະອາດ ແລະ ການຂ້າເຊື້ອຢ່າງຖືກຕ້ອງ; ຖ້າທ່ານນຳໃຊ້ເຕົ້ານົມທຽມ ລູກຂອງທ່ານອາດຈະບໍ່ຕ້ອງການດູດນົມແມ່ອີກຕໍ່ໄປ ລວມທັງ ການກຳນົດ ຂະໜາດຕົວອັກສອນ ບໍ່ໃຫ້ຫຼຸດໜຶ່ງສ່ວນສາມ (1/3) ແລະ ຂະ ໜາດຄວາມສູງ ຂອງຕົວອັກສອນ ຕ້ອງບໍ່ໃຫ້ຫຼຸດ 2 ມິນລິແມັດ (2 ມມ);

3) ວິທີການທຳຄວາມສະອາດ ແລະ ການຂ້າເຊື້ອ ຕ້ອງພິມ ເປັນຕົວອັກສອນ ແລະ ໃຊ້ຮູບພາບ, ຮູບແຕ້ມ ໃຫ້ເຫັນໄດ້ ຢ່າງຈະແຈ້ງ ແລະ ເຂົ້າໃຈງ່າຍ;

4) ອະທິບາຍ ເຖິງການປ້ອນນົມດ້ວຍຈອກ ແມ່ນຖືກສຸຂະອະນາໄມຫຼາຍກວ່າການໃຫ້ນົມດ້ວຍເຕົ້ານົມທຽມ.

## IV. ຄວາມຮັບຜິດຊອບ ຂອງບັນດາກົມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ

ບັນດາກົມ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ, ນອກຈາກ ຈະມີຄວາມຮັບຜິດຊອບ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນແລ້ວ ຍັງຕ້ອງມີຄວາມຮັບຜິດຊອບ ຕໍ່ຄຳແນະນຳ ການຈັດຕັ້ງການປະຕິບັດດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ນຍ, ລົງວັນທີ 30 ທັນວາ 2019 ດັ່ງນີ້:

### 1. ຄວາມຮັບຜິດຊອບ ຂອງກົມອະນາໄມ ແລະ ສົ່ງເສີມສຸຂະພາບ

ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ເປັນຈຸດປະສານງານຫຼັກ ໃນການຈັດຕັ້ງປະຕິບັດ ຄຳແນະນຳການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ມີຄວາມຮັບຜິດຊອບ ດັ່ງນີ້:

1) ໂຄສະນາ ເຜີຍແຜ່ ດຳລັດວ່າດວ້ຍຜະລິດຕະພັນອາຫານເດັກອ່ອນ ແລະ ອຸປະກອນອາຫານສຳລັບເດັກອ່ອນ ແລະ ເດັກນອ້ຍ ແລະ ຄຳແນະນຳ ການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ແລະ ບັນດາຂໍ້ມູນ ຂ່າວສານ ກ່ຽວກັບການປົກປ້ອງສົ່ງເສີມ ແລະ ສະໜັບສະໜູນ ການລ້ຽງລູກດ້ວຍນ້ຳນົມແມ່ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ແລະ ຊຸມຊົນ;

2) ກຳນົດສະຖານທີ່ ຈຳໜ່າຍ, ຊື້ຂາຍ, ແຈກຢາຍ ຜະລິດຕະພັນອາຫານເດັກອ່ອນ ແລະ ອຸປະກອນອາຫານສຳລັບເດັກອ່ອນ ແລະ ເດັກນອ້ຍ ໃຫ້ເໝາະສົມ;

3) ຄົ້ນຄວ້າ, ວາງແຜນ, ເກັບກຳຂໍ້ມູນ, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວ ຂອງການຄຸ້ມຄອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

4) ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

5) ໃຫ້ການຝຶກອົບຮົມ ກ່ຽວກັບ ການຕິດຕາມ, ກວດກາ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

6) ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ແລະ ຄຳແນະນຳ ສະບັບນີ້;

7) ຮັບຄຳຮ້ອງທຸກ ຫຼື ການລາຍງານ ກ່ຽວກັບການລະເມີດດຳລັດ ພ້ອມທັງ ຄົ້ນຄວ້າ ວິທີແກ້ໄຂ ແລະ ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ;

8) ມີຄວາມຮັບຜິດຊອບອື່ນ ຕາມກົດໝາຍ.

### 2. ຄວາມຮັບຜິດຊອບ ຂອງກົມອາຫານ ແລະ ຢາ ( ກອຢ )

ກົມອາຫານ ແລະ ຢາ ມີຄວາມຮັບຜິດຊອບ ດັ່ງນີ້:

1) ຕິດຕາມ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ໂດຍສະເພາະແມ່ນ ຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນອາຫານ ລວມທັງ ສະຫຼາກສິນຄ້າ ຂອງຫົວໜ່ວຍທຸລະກິດ ຂາຍຍົກ ແລະ ຂາຍຍ່ອຍ;

2) ຄຸ້ມຄອງການໂຄສະນາຂອງຜູ້ດໍາເນີນທຸລະກິດ ກ່ຽວກັບຜະລິດຕະພັນອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ໂດຍປະສານ ສົມທົບ ແລະ ຮ່ວມມື ກັບບັນດາກົມພາຍໃນກະຊວງສາທາລະນະສຸກ, ບັນດາກະຊວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸດສາຫະກາ ແລະ ການຄ້າ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ພາກສ່ວນອື່ນທີ່ຕິດພັນກັບຊຸມຊົນ;

3) ສະເໜີ ໂຈະ ຫຼື ຍົກເລີກ ກ່ຽວກັບ ການນໍາເຂົ້າ, ການຜະລິດ ແລະ ການຈໍາໜ່າຍ ຜະລິດຕະພັນອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ທີ່ມີການລະເມີດກົດໝາຍ, ດໍາລັດ ແລະ ຄໍາແນະນໍາສະບັບນີ້;

4) ກວດສອບ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ກ່ອນການອະນຸມັດ ການນໍາເຂົ້າ, ການບໍລິຈາກ ຫຼື ການຊ່ວຍເຫຼືອ ແລະ ອື່ນໆ;

5) ມີຄວາມຮັບຜິດຊອບອື່ນ ຕາມກົດໝາຍ.

## 3. ຄວາມຮັບຜິດຊອບ ຂອງກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ( ກປຟ )

ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ມີຄວາມຮັບຜິດຊອບ ດັ່ງນີ້:

1) ຕິດຕາມ ແລະ ກວດກາ ກ່ຽວກັບ ການຂາຍ, ການມີ ແລະ ການນໍາໃຊ້ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ທີ່ຢູ່ພາຍໃນ ແລະ ອ້ອມຂ້າງສະຖານທີ່ບໍລິການສາທາລະນະສຸກ;

2) ຕິດຕາມ ແລະ ກວດກາ ພຶດຕິກໍາ ຂອງພະນັກງານສາທາລະນະສຸກ ທີ່ເຮັດວຽກຢູ່ໃນລະບົບການຮັກສາສຸຂະພາບ, ຜູ້ຊົມໃຊ້ ແລະ ຜູ້ດໍາເນີນທຸລະກິດ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ;

3) ປະສານ ສົມທົບ ແລະ ຮ່ວມມື ກັບບັນດາກົມທີ່ກ່ຽວຂ້ອງພາຍໃນກະຊວງສາທາລະນະສຸກ;

4) ມີຄວາມຮັບຜິດຊອບອື່ນ ຕາມກົດໝາຍ.

## 4. ຄະນະວິຊາການຮັບຜິດຊອບຈັດຕັ້ງປະຕິບັດ

ຄະນະວິຊາການຮັບຜິດຊອບຈັດຕັ້ງປະຕິບັດ ແມ່ນພາຍໃຕ້ການຊີ້ນໍາ ຄະນະກໍາມະການແຫ່ງຊາດ ເພື່ອຄຸ້ມຄອງອາຫານ ແລະ ຢາ ສະບັບເລກທີ 51/ນຍ, ລົງວັນທີ 3 ສິງຫາ 2018. ກະຊວງ ສາທາລະນະສຸກ ຕ້ອງແຕ່ງຕັ້ງຄະນະວິຊາການ ພາຍຫຼັງຄໍາແນະນໍາສະບັບນີ້ ຖືກຮັບຮອງ ແລະ ປະກາດໃຊ້ ຊຶ່ງປະກອບດ້ວຍ ວິຊາການຈາກ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ສູນໂພຊະນາການ, ສູນສື່ສານເພື່ອສຸຂະພາບ ແລະ ສຸຂະສຶກສາ, ສູນສຸຂະພາບແມ່ ແລະ ເດັກ, ກົມອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ ແລະ ສູນວິໄຈອາຫານ ແລະ ຢາ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມຈັດຕັ້ງ ແລະ ພະນັກງານ, ກົມກວດກາ ແລະ ວິຊາການຈາກບັນດາກະຊວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງ.

ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະວິຊາການ ຮັບຜິດຊອບຈັດຕັ້ງປະຕິບັດ ມີດັ່ງນີ້:

1) ຮັບປະກັນໃຫ້ມີ ການຕິດຕາມ, ກວດກາ ແລະ ການຈັດຕັ້ງປະຕິບັດ ດໍາລັດວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ນຍ, ລົງວັນທີ

30 ທັນວາ 2019 ແລະ ຄຳແນະນຳສະບັບນີ້ ໂດຍປະສານສົມທົບກັບບັນດາກະຊວງ, ອົງການ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;

**2)** ຕ້ອງໄດ້ຕິດຕາມ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຢ່າງເປັນປົກກະຕິ;

**3)** ສະເໜີໃຫ້ມີ ການປັບໃໝ, ໂຈະ, ຍົກເລີກ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ແລະ ມາດຕະການລົງວິໄນຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ;

**4)** ທຸກການລະເມີດທີ່ມີການ ປັບໃໝ, ສະເໜີ ໂຈະ, ຍົກເລີກ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ແລະ ມາດຕະການລົງວິໄນ ຕ້ອງໄດ້ລາຍງານໃຫ້ ຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງອາຫານ ແລະ ຢາ ຮັບຊາບ ຢ່າງທັນການ;

**5)** ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

**6)** ຈັດກອງປະຊຸມ ປະຈຳໄຕມາດ ທົບທວນ ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໂດຍສະເພາະຈຳນວນ ແລະ ລັກສະນະຂອງການລະເມີດ ທີ່ໄດ້ລາຍງານຜ່ານສາຍດ່ວນປົກປ້ອງຜູ້ບໍລິໂພກ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບ ລວມທັງການນຳໃຊ້ມາດຕະການ ແລະ ສະຫຼຸບລາຍງານໃຫ້ຄະນະກຳມະການຄຸ້ມຄອງອາຫານ ແລະ ຢາ ຮັບຊາບ.

## V. ບົດບັນຍັດສຸດທ້າຍ

### 1. ການຈັດຕັ້ງປະຕິບັດ

ມອບໃຫ້ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ເປັນເຈົ້າການ ແລະ ປະສານສົມທົບ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

### 2. ຜົນສັກສິດ

ຜູ້ດຳເນີນທຸລະກິດ ຫຼື ຜູ້ປະກອບການ ກ່ຽວກັບ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ທີ່ໄດ້ຮັບໃບອະນຸຍາດ ກ່ອນຄຳແນະນຳສະບັບນີ້ ຕ້ອງປັບປຸງການດຳເນີນທຸລະກິດຂອງຕົນ ໃຫ້ສອດຄ່ອງກັບດຳລັດ ແລະ ຄຳແນະນຳສະບັບນີ້.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ 15 ວັນເປັນຕົ້ນໄປ.

**ລັດຖະມົນຕີ**

ຮສ ດຣ. ບຸນກອງ ສີຫາວົງ